ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກໍາ ແລະ ການຄ້າ

ຫ້ອງການ

ເລກທີ 0012../ຫອຄ.

ນະຄອນຫຼວງວຽງຈັນ, ວັນທີ 05.. ມັງກອນ 2022.

# ແຈ້ງການ

ເຖິງ: ບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດ ພາຍໃນນະຄອນຫຼວງວຽງຈັນ.

ເລື່ອງ: ແຈ້ງເຊີນເຂົ້າຮ່ວມປະມູນສົມທຽບລາຄາກ່ຽວກັບການສະໜອງ ເຄື່ອງໃຊ້ຫ້ອງການ, ເຄື່ອງໄອທີ, ການສ້ອມແປງບໍາລຸງຮັກສາລະບົບແອເຢັນ-ໄຟຟ້າ ແລະ ພາຫານະ ໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ປະຈໍາປີ 2022.

- ອີງຕາມກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ນຍ,ລົງວັນທີ 02 ພະຈິກ 2017.
- ອີງຕາມຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 0634/ອຄ.ກຈພງ, ລົງວັນທີ 01 ກໍລະກົດ 2020.
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍກໍານົດໝາຍການໃຊ້ຈ່າຍງົບປະມານບໍລິຫານຂອງລັດ ສະບັບເລກທີ 4000/ກງ, ລົງ ວັນທີ 12 ທັນວາ 2018.

ຫ້ອງການ ກະຊວງອຸດສາຫະກໍາ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດຕ່າງໆພາຍໃນນະຄອນຫຼວງວຽງຈັນ, ທີ່ມີຈຸດປະສົງຢາກເຂົ້າຮ່ວມປະມູນສົມທຽບລາຄາ (ຕາມລາຍການຕາຕະລາງຄັດຕິດມາພ້ອມ) ເພື່ອຕອບສະໜອງໃຫ້ກະຊວງອຸດສາຫະກໍາ ແລະ ການຄ້າ ປະຈໍາປີ 2022 ດ້ວຍງົບປະມານຂອງລັດ ລາຍລະອຽດມີດັ່ງລຸ່ມນີ້:

1. ການຕອບສະໜອງເຄື່ອງຮັບໃຊ້ຫ້ອງການ, ເຄື່ອງອານາໄມຕຶກສໍານັກງານ, ເຄື່ອງຮັບແຂກຄະນະນໍາກະຊວງ ແລະ ເຄື່ອງບໍາລຸງຮັກສາພາຫະນະ. (ຕາຕະລາງ 1).
2. ການຕອບສະໜອງເຄື່ອງຄອມພິວເຕີ, ເຄື່ອງກ໋ອບປີ້, ນໍ້າມຶກປິ້ນເຕີ້, ນໍ້າມຶກເຄື່ອງກ໋ອບປີ້ ແລະ ການຕິດຕັ້ງສ້ອມແປງ, ປ່ຽນຖ່າຍອາໄລ່ລະບົບເຄື່ອງ IT. (ຕາຕະລາງ 2).
3. ການຕອບສະໜອງອຸປະກອນບໍາລຸງຮັກສາສໍານັກງານເຊັ່ນ: ການສ້ອມແປງປ່ຽນຖ່າຍອາໄລ່ລະບົບແອເຢັນ, ລະບົບໄຟຟ້າ ແລະ ວຽກກໍ່ສ້າງສ້ອມແປງຂະໜາດນ້ອຍ. (ຕາຕະລາງ 3).
4. ການບໍລິການສ້ອມແປງປ່ຽນຖ່າຍອາໄຫລ່ ແລະ ບໍາລຸງຮັກສາພາຫະນະ. (ຕາຕະລາງ 4).
5. ການບໍລິການອານາໄມຕຶກສໍານັກງານຂອງກະຊວງ ອຸດສາຫະກໍາ ແລະ ການຄ້າ. (ຕາຕະລາງ 5).

ໃນ 05 ລາຍການ ທີ່ກ່າວມາຂ້າງເທິງນີ້ ບໍລິສັດໃດ ຫຼື ວິສາຫະກິດໃດ ທີ່ຈະເຂົ້າຮ່ວມການປະມູນ ແມ່ນມີສິດເລືອກໄດ້ພຽງ 01 ລາຍການເທົ່ານັ້ນ ແລະ ຕ້ອງໄດ້ປະຕິບັດຕາມລະບຽບ ແລະ ເງື່ອນໄຂດັ່ງນີ້:

I. ກຳນົດຂອບເຂດເວລາ:

- ສາມາດພົວພັນຊື້ຊອງປະມູນໄດ້ທີ່ ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ (ພະແນກບໍລິຫານ ແລະ ພິທີການ) ນັບແຕ່ວັນທີ 6.1.2022 ຫາ 13.1.2022 ແລະ ສົ່ງຊອງປະມູນໃຫ້ຄະນະກຳມະການປະມູນ ບໍ່ໃຫ້ກາຍເວລາ 11:00 ໂມງ ຂອງວັນທີ 21.1.22 ທີ່ຫ້ອງການ ຊັ້ນ 1 ແລະ ຈະມີການເປີດຊອງປະມູນ ໃນເວລາ 14:00 ໂມງ ຂອງວັນດຽວກັນ.
- ລາຄາຊອງປະມູນ ຊອງລະ 300.000 ກີບ/ຊອງ (ເງິນຊື້ຊອງປະມູນນີ້ແມ່ນບໍ່ໄດ້ສົ່ງຄືນ).
- ພາຍຫຼັງສຳເລັດການເປີດຊອງປະມູນ ພາຍໃນ 07 ວັນ ຈະແຈ້ງຜົນການປະມູນ ໃຫ້ບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດຮັບຊາບ ແລະ ແຈ້ງເຊີນໃຫ້ຫົວໜ່ວຍວິສາຫະກິດທີ່ຊະນະການປະມູນ ເຂົ້າມາຮ່ວມຕົກລົງເຈລະຈາ ເຊັນສັນຍາກັບຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຕາມລະບຽບຫຼັກການ.

II. ເອກະສານທີ່ຕ້ອງປະກອບຂັດຕິດມາພ້ອມຊອງປະມູນ:

- ຕ້ອງມີໃບທະບຽນວິສາຫະກິດທີ່ຖືກຕ້ອງ.
- ຕ້ອງມີໃບທະບຽນອາກອນ ຫຼື ໃບຢັ້ງຢືນການເສຍອາກອນ ປະຈຳປີ 2020 ຫຼື 2021.
- ຕ້ອງມີໃບທະບຽນອາກອນສະເພາະຂອງວິສາຫະກິດ.
- ຕ້ອງມີໃບອະນຸຍາດດຳເນີນທຸລະກິດຂອງຂະແໜງການທີ່ກ່ຽວຂ້ອງ. (ຖ້າມີ)
- ຕ້ອງມີແຜນວາດທີ່ຕັ້ງຂອງວິສາຫະກິດ, ທີ່ຢູ່, ເບີໂທ ຫຼື Email.
- ຕ້ອງລະບຸບັນດາເຄື່ອງຂອງ, ອຸປະກອນ ແລະ ສິນຄ້າ ຜະລິດຈາກປະເທດໃດ ຕາມລາຍການທີ່ກຳນົດຢູ່ໃນຕາຕະລາງ, ພ້ອມທັງສະຫຼຸບສັງລວມຕົວເລກທັງໝົດຂອງແຕ່ລະລາຍການ ແລະ ຕົວເລກລວມຂອງແຕ່ລະຂໍ້ໃຫ້ຖືກຕ້ອງ ແລະ ຊັດເຈນ), ທຸກໆລາຍການຕ້ອງໃສ່ລາຄາໃຫ້ຄົບຕາມຕາຕະລາງ (ລາຄາທີ່ໃສ່ໃນຕາຕະລາງແມ່ນລວມອາກອນທັງໝົດ), ຖ້າບໍ່ປະຕິບັດຕາມເງື່ອນໄຂທີ່ກ່າວມາຂ້າງເທິງ ຖືວ່າວິສາຫະກິດນັ້ນ ແມ່ນຖືກສະຫຼະສິດ ຈະບໍ່ຮັບພິຈາລະນາ.

III. ເງື່ອນໄຂມາດຖານ ແລະ ຄວາມພ້ອມຂອງວິສາຫະກິດ:

- ວິສາຫະກິດຕ້ອງຕອບສະໜອງວັດຖຸອຸປະກອນໃຫ້ຄູ່ສັນຍາ ຕາມກຳນົດເວລາທີ່ຕົກລົງກັນໄວ້ໃນສັນຍາ.
- ຕ້ອງເປັນວິສາຫະກິດທີ່ມີການເຄື່ອນໄຫວດຳເນີນທຸລະກິດທີ່ມີປະສົບການຢ່າງໜ້ອຍ 02 ປີ ຂຶ້ນໄປ.
- ວິສາຫະກິດຕ້ອງມີວິຊາການ, ນາຍຊ່າງຂອງຕົນ ທີ່ມີປະສົບການໃນການຕິດຕັ້ງ, ສ້ອມແປງ ຢ່າງໜ້ອຍ 02 ຄົນຂຶ້ນໄປ.

IV. ເງື່ອນໄຂການຊຳລະສະສາງ:

ການຊຳລະສະສາງແມ່ນນຳໃຊ້ຮ່ວງເງິນງົບປະມານ ປະຈຳປີ 2022 ຂອງກະຊວງອຸດສາຫະກຳ ແລະ ການຄ້າ ດ້ວຍລະບົບເງິນໂອນ (ປະຕິບັດຕາມລະບຽບຂອງກະຊວງການເງິນ) ຊຶ່ງການຊຳລະແມ່ນໄດ້ຊຳລະໜີ້ສິນໃຫ້ຫົວໜ່ວຍວິສາຫະກິດທີ່ຊະນະການປະມູນ ປະຈຳປີ 2021 ສຳເລັດແລ້ວກ່ອນທັງໝົດ ຈຶ່ງຊຳລະໜີ້ສິນຕາມມູນຄ່າລວມທັງໝົດຂອງແຕ່ລະລາຍການ ໃຫ້ວິສາຫະກິດ ທີ່ຊະນະການປະມູນປະຈຳປີ 2022 ໂດຍປະຕິບັດຕາມສັນຍາທີ່ຕົກລົງຮ່ວມກັນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາບໍລິສັດ ແລະ ຫົວໜ່ວຍວິສາຫະກິດທີ່ມີຄວາມພ້ອມຕາມເງື່ອນໄຂ ແລະ ຈຸດປະສົງທີ່ກ່າວມາຂ້າງເທິງນີ້ດ້ວຍ.

ຮັກສາການແທນຫົວໜ້າຫ້ອງການ.

ທ.ກິ່ງສະດອນ ເພັດດາວເຮືອງ

ຕິດຕໍ່ພົວພັນ:
ພະແນກບໍລິຫານ ແລະ ພິທີການ.
ໂທ:021 412000, 020 99722047 (ທ.ແສງຕາວັນ)